# ແຜນການຈັດຕັ້ງປະຕິບັດວັກຊີນກັນພະຍາດ COVID-19 ປະຈຳໄຕມາດທີ 4

□ **ຜູ້ທີ່ຍັງບໍ່ໄດ້ສັກວັກຊີນ**

◦ ການສັກວັກຊີນຊະນິດ Pfizer ແລະ Moderna ຢູ່ສະຖາບັນການແພດທີ່ຖືກ ແນະນຳ*

* ຜູ້ທີ່ບໍ່ມີປະກັນໄພສຸຂະພາບສາມາດໄປສັກຢາກັນພະຍາດໄດ້ທີ່ ສູນສັກຢາວັກຊີນ.

- ຜູ້ສະເໜີສັກວັກຊີນ AstraZeneca: ສາມາດສັກຢາວັກແຊັງຄັ້ງທີ 1 ໄດ້ (ອາຍຸ30 ປີຂຶ້ນໄປ).

- Janssen: ໂດຍພື້ນຖານແລ້ວຜູ້ມີອາຍຸ 50 ປີຂຶ້ນໄປສັກຢາປ້ອງກັນ.

*ຜູ້ທີ່ມີອາຍຸເກີນ30ປີແລະຜູ້ທີ່ບໍ່ສາມາດໄດ້ຮັບການສັກຢາຄັ້ງທີສອງ,ໃຫ້ສອບຖາມຢູ່ທີ່ສູນສຸຂະພາບສາທາລະນະເພື່ອຮັບການສັກຢາວັກຊີນທີ່ກຳນົດໄວ້.

□ **ປັບໄລຍະຫ່າງຂອງການສັກວັກຊີນຊະນິດ Moderna ແລະ Pfizer**

◦ໃນອາທິດທີ2ຂອງເດືອນຕຸລາ(ວັນທີ11ຕຸລາຫາວັນທີ17 ຕຸລາ), ກຳນົດເວລາໄດ້ຖືກປັບປຸ່ງນຈາກຜູ້ທີ່ໄດ້ຈອງການສັກວັກຊີນປ້ອງກັນຄັ້ງທີສອງ.
- ຫຍໍ້ລົງ 1 ອາທິດ (6 ອາທິດ→ ເປັນ 5 ອາທິດ): ອາທິດທີ 2 ຂອງເດືອນຕຸລາ ຫາ ອາທິດທີ 1 ຂອງເດືອນພະຈິກ (ວັນທີ 11 ຕຸລາ ~7 ພະຈິກ).
- ຫຼຸດລົງ 2 ອາທິດ (6 ອາທິດ→ ເປັນ 4 ອາທິດ): ຜູ້ທີ່ມີກຳນົດຈະໄດ້ຮັບການສັກຢາ ວັກຊີນ ປ້ອງກັນຄັ້ງທີສອງຫຼັງຈາກອາທິດທີ 2 ຂອງເດືອນພະຈິກ (ວັນທີ 8 ພະຈິກ ~ 14 ພະຈິກ).

*ຖ້າມັນມີຄວາມຍາກທີ່ຈະສັກຢາປ້ອງກັນໃນວັນທີທີ່ໄດ້ປັບປຸ່ງນເນື່ອງຈາກສະພາບການສ່ວນຕົວ,ແຕ່ວັນທີ1ຕຸລາ(ວັນສຸກ)ສາມາດປຸ່ງນຕາຕະລາງເວລາການຈອງວັກຊີນໄດ້ ຢູ່ທີ່ເວັບໄຊ (http://ncvr2.kdca.go.kr).

◦ຫຼັງຈາກເດືອນຕຸລາ, ທ່ານໃດທີ່ໄດ້ສັກວັກຊີນເຂັມທີ1 ຈະໄດ້ຮັບເຂັມທີ2 ຫລັງຈາກ 3ອາທິດສຳລັບ Pfizer ແລະ 4ອາທິດ ສຳລັບ Moderna.

□ **ການສັກຢາປ້ອງກັນພະຍາດໃຫ້ເດັກແລະໄວໜຸ່ມ (Pfizer)**

| ເປົ້າໝາຍ | ອາຍຸ 16-17 ປີ (ເກີດໃນ 2004 - ເກີດໃນ 2005) | ອາຍຸ 12-15 ປີ (ເກີດໃນ 2006 - ເກີດໃນ 2009) |
|---|---|---|
| **ການຈອງລ່ວງ ໜ້າ** | ວັນທີ5ເດືອນຕຸລາ(ອັງຄານ)-ວັນທີ29ເດືອນຕຸລາ(ສຸກ) | ວັນທີ18 ເດືອນຕຸລາ(ຈັນ) -ວັນທີ12 ເດືອນພະຈິກ(ສຸກ) |
| **ການສັກຢາ ວັກຊີນ** | ວັນທີ18ເດືອນຕຸລາ(ວັນຈັນ) -ວັນທີ13ເດືອນພະຈິກ (ວັນເສົາ) | ວັນທີ1 ເດືອນພະຈິກ(ວັນຈັນ) -ວັນທີ27 ເດືອນພະຈິກ(ວັນເສົາ) |

*ອີງຕາມປີເກີດ. ຜູ້ທີ່ເກີດໃນປີ 2010 ໃນບັນດານັກຮຽນຊັ້ນປະຖົມປີທີ6 ແມ່ນບໍ່ໄດ້ຮັບການສັກຢາວັກຊີນ.

◦ ຫຼັງຈາກໄດ້ຈອງສັກຢາເປັນການສ່ວນຕົວ ໂດຍບຸກຄົນຫຼືຕົວແທນຂອງທ່ານ, ໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງ (ຜູ້ຕາງໜ້າ ຕາມກົດໝາຍ) ຈຶ່ງສາມາດຮັບການສັກຢາວັກຊີນຢູ່ສະຖາບັນການແພດໄດ້.

□ **ສັກຢາວັກຊີນໃຫ້ແມ່ຍິງຖືພາ (ຕັດສິນໃຈດ້ວຍຕົນເອງ)**

◦ຖ້າຫາກມີພະຍາດປະຈຳຕົວຫຼືຢູ່ໃນໄລຍະເລີ່ມຕົ້ນຂອງການຖືພາ(ໜ້ອຍກວ່າ12ອາທິດ)ແມ່ແລະເດັກອ່ອນ,ແນະນຳໃຫ້ກວດເບິ່ງສະພາບການແລະຈຶ່ງຮັບການສັກຢາປ້ອງກັນ.

-ສາມາດຈອງໄດ້ຕັ້ງແຕ່ວັນທີ8ເດືອນຕຸລາ(ວັນສຸກ)*(ສະຖານະການຖືພາ,ຄາດຄະເນວັນເດືອນປີທີ່ຈະຄອດລູກ)ກະລຸນາຂຽນຟອມດ້ວຍຕົນເອງ ໃນເວລາການຈອງ ເພື່ອໃຫ້ຮັບຮູ້ຂໍ້ມູນຂອງທ່ານ.

*ຖ້າຂໍ້ມູນແມ່ຍິງຖືພາບໍ່ສາມາດຕື່ມໃສ່ຟອມໄດ້(ເຊັ່ນການສັກວັກຊີນທີ່ຍັງເຫຼືອ,ແລະອື່ນ)ມັນຈະຖືກສົ່ງໃຫ້ພະນັກງານການແພດກ່ອນໃນເວລາທີ່ ສັກວັກຊີນຢູ່ສະຖາບັນ ການແພດ.

◦ ດຳເນີນການສັກວັກຊີນ Pfizer ຫຼື Moderna ຢູ່ສະຖາບັນການແພດທີ່ຮັບຜິດຊອບ (ວັນທີ18 ເດືອນຕຸລາ (ວັນຈັນ) ~)

*ສຳລັບການປົກປ້ອງແມ່ຍິງຖືພາ,ພວກເຮົາຮຽກຮ້ອງໃຫ້ປະຊາຊົນທີ່ຢູ່ອ້ອມແອ້ມແມ່ຍິງຖືພາໄດ້ຮັບການສັກຢາວັກຊີນ,ລວມທັງສະມາຊິກໃນຄອບຄົວຜູ້ທີ່ຢູ່ໃກ້ຊິດ.

□ **ສັກວັກຊີນກະຕຸ້ນ** (Booster Shot)

◦ຜູ້ທີ່ມີພູມຕ້ານທານຫລຸດ*, ໃຫ້ການສັກຢາວັກຊີນກະຕຸ້ນ 2 ເດືອນຫຼັງຈາກ ສຳ ເລັດການສັກຢາວັກຊີນຂັ້ນຕົ້ນ,
ການຈອງລ່ວງໜ້າ ໄດ້ເລີ່ມຕົ້ນວັນທີ 18 ເດືອນຕຸລາ (ວັນຈັນ). ການສັກວັກຊີນເລີ່ມຈາກວັນທີ 1 ເດືອນພະຈິກ (ວັນຈັນ)
*ຜູ້ໃຫຍ່ທີ່ມີອາຍຸ18ປີຂຶ້ນໄປຜູ້ທີ່ມີຄວາມຫຍຸ້ງຍາກໃນການສ້າງພູມຕ້ານທານ,ເຊັ່ນ:ຄົນເຈັບທີ່ເປັນພະຍາດມະເຮັງເມັດເລືອດຫຼືການປິ່ນປົວດ້ວຍການປ້ອງ ກັນພູມຕ້ານທານ.

◦ພະນັກງານໂຮງໝໍປິ່ນປົວພະຍາດໂຄວິດ19,ການປິ່ນປົວຢູ່ໂຮງໝໍ,ການຮັບເຂົ້າໂຮງໝໍ,ຄົນງານຢູ່ໃນໂຮງໝໍພະຍາບານແລະສະຖານທີ່ອຳນວຍຄວາມສະດວກແລະຄົນງານ ໃນໂຮງໝໍລະດັບ ຫລືສະຖາບັນການແພດຂັ້ນສູງ.

◦ ການຈອງລ່ວງ ໜ້າ ສຳ ລັບຜູ້ສູງອາຍຸທີ່ມີອາຍຸ 60 ປີຂຶ້ນໄປແລະກຸ່ມອື່ນທີ່ມີຄວາມສ່ຽງສູງ** ຕັ້ງແຕ່ວັນທີ 5 ຕຸລາ (ວັນອັງຄານ). ການສັກຢາປ້ອງກັນຈະເລີ່ມຈາກວັນທີ 25 ຕຸລາ (ວັນຈັນ) (ການສະໜັບສະໜູນ ການຈອງ, ເຊັ່ນຕົວແທນຈອງຢູ່ສູນຊຸມຊົນ, ແລະອື່ນ)

* ຜູ້ທີ່ມີສິດໄດ້ຮັບການສັກຢາປ້ອງກັນພະຍາດ (ເດືອຕຸລາ~) ແມ່ນຜູ້ທີ່ມີອາຍຸ 75 ປີຂຶ້ນໄປ ຜູ້ທີ່ໄດ້ຮັບການສັກຢາວັກຊີນຕັ້ງແຕ່ເດືອນເມສາ, ການນຳໃຊ້ສະຖານອຳນວຍຄວາມສະດວກສຳລັບຜູ້ອາວຸໂສ(ສະຖານອຳນວຍຄວາມສະດວກຜູ້ອາວຸໂສ,ສະຖານທີ່ດຳລົງຊີວິດຂອງຊຸມຊົນຜູ້ສູງອາຍຸ, ສະຖານທີ່ດູແລກາງເວັນ/ກາງຄືນ, ການດູແລໄລຍະສັ້ນ), ຜູ້ຢູ່ອາໄສແລະ ຄົນງານ.

<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣີ 1577-1366>